ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມວຽກງານຮ່ວມມືສາກົນໃນຂະແໜງການທະນາຄານ




ກອງປະຊຸມວຽກງານຮ່ວມມືສາກົນ ຂອງທະນາຄານແຫ່ງ ສປປ ລາວ ໄດ້ຈັດຂຶ້ນເປັນຄັ້ງທຳອິດ ໃນວັນທີ 26 ກຸມພາ 2021 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ). ພ້ອມນີ້, ກໍ່ມີບັນດາຄະນະກົມ ທຽບເທົ່າກົມ, ທະນາຄານທຸລະກິດ, ສາຂາພາກຂອງ ທຫລ ແລະ ຕາງໜ້າກະຊວງການຕ່າງປະເທດ ແລະ ກະຊວງແຜນການ ແລະ ການລົງທຶນ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ໄດ້ມີການຕີລາຄາສະພາບການໃນພາກພື້ນ ແລະ ສາກົນ, ທົບທວນ ການປະຕິບັດວຽກຮ່ວມມືສາກົນຂອງຂົງເຂດທະນາຄານ 5 ປີຜ່ານມາ ແລະ ກຳນົດທິດທາງໃນ 5 ປີຕໍ່ໜ້າເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຜັນຂະຫຍາຍເຂົ້າສູ່ລວງເລິກ ແລະ ລວງກວ້າງ. ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນຈາກຕາງໜ້າກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ຕິດພັນກັບການກຳນົດແນວທາງການຕ່າງປະເທດຂອງພັກ-ລັດ ແລະ ຄຳແນະນຳການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ (ODA). ຄຽງຄູ່ກັນນີ້ ກໍ່ໄດ້ຮັບຟັງການປະກອບຄຳເຫັນຂອງກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບຊຳລະ, ກົມຈັດຕັ້ງແລະພະນັກງານ ແລະ ທະນາຄານການຄ້າຕ່າງປະເທດລາວ ກ່ຽວກັບຈັດຕັ້ງປະຕິບັດ ການເຊື່ອມໂຍງລະບົບການຄຸ້ມຄອງ ແລະ ຜະລິດຕະພັນທາງການເງິນ ເຂົ້າກັບພາກພື້ນ ແລະ ສາກົນ ຊຶ່ງເປັນສິ່ງຈຳເປັນໃນການສ້າງລະບົບການເງິນ-ເງິນຕາ ໃຫ້ມີຄວາມເຂັ້ມແຂງໝັ້ນຄົງ.

ພ້ອມນີ້, ກອງປະຊຸມໄດ້ມີການຄົ້ນຄວ້າ ປະກອບຄໍາເຫັນຕໍ່ຮ່າງນິຕິກໍາຈໍານວນໜຶ່ງ ກ່ຽວກັບກົນໄກ ແລະ ພາລະບົດບາດ ວຽກພົວພັນຮ່ວມມືສາກົນ ທີ່ຈະເປັນເປັນບ່ອນອີງໃຫ້ແກ່ກົມກອງ ແລະ ທຽບເທົ່າພາຍໃນ ຂອງ ທຫລ ສາມາດຜັນຂະຫຍາຍວຽກຮ່ວມມືສາກົນໃຫ້ມີປະສິດທິພາບ ແລະ ມີຄວາມຄ່ອງຕົວຫຼາຍຂຶ້ນ ທັງເປັນການຊຸກຍູ້ວຽກການຕ່າງປະເທດຂອງຂົງເຂດທະນາຄານຢູ່ ສປປ ລາວ. ກອງປະຊຸມຍັງໄດ້ເປັນເອກະພາບໃນການເອົາໃຈໃສ່ຕິດຕາມສະພາບການຂອງພາກພື້ນ ແລະ ສາກົນຢ່າງໃກ້ຊິດ ເພາະໃນປະຈຸບັນໄດ້ມີຄວາມຜັນແປຢ່າງສະລັບສັບຊ້ອນ ຢ່າງໄວວາ ແລະ ຄາດຄະເນໄດ້ຍາກ. ທັງນີ້, ກໍ່ເພື່ອເປັນການເພີ່ມປະສິດທິພາບການຍາດແຍ່ງກາລະໂອກາດ ແລະ ຮັບມືກັບສິ່ງທ້າທາຍ ໄດ້ຢ່າງທັນການ.

#ຂ່າວ ແລະ ພາບໂດຍ: ກົມຮ່ວມມືສາກົນ

## ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ